ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມແຜນການ ແລະ ການຮ່ວມມື

ເລກທີ: 0281/ກຜຮ.ຮສຄ

ນະຄອນຫຼວງວຽງຈັນ, ວັນທີ 04 APR 2022

# ແຈ້ງການ

ເຖິງ: ບັນດາບໍລິສັດທີ່ປຶກສາ ບໍລິການວຽກຄົ້ນຄວ້າ, ວິໄຈ, ອອກແບບ ແລະ ທີ່ປຶກສາບຸກຄົນ

ເລື່ອງ: ເຊີນເຂົ້າຮ່ວມການປະມູນສົມທຽບເງື່ອນໄຂ, ປະສົບການ ແລະ ລາຄາກ່ຽວກັບການບໍລິການທີ່ປຶກສາ ແລະ ຄົ້ນຄວ້າວິໄຈ ກ່ຽວກັບ "ການສຶກສາ ແລະ ຄົ້ນຄວ້າ ຫົວຂໍ້ ເຂດການຄ້າເສລີ ພາຍໃຕ້ຂອບການຮ່ວມມື ແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ" ປະຈຳປີ 2022.

- ອີງຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ລະບຽບການຈັດຕັ້ງປະຕິບັດຄຳແນະນຳ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
- ອີງຕາມຂໍ້ຕົກລົງວ່າດ້ວຍກຳນົດໝາຍ ການໃຊ້ຈ່າຍງົບປະມານບໍລິຫານຂອງລັດ (ສະບັບປັບປຸງ), ເລກທີ 4000/ກງ, ລົງວັນທີ 12 ທັນວາ 2018.

ກົມແຜນການ ແລະ ການຮ່ວມມື, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງເຊີນມາຍັງບັນ ດາບໍລິສັດທີ່ປຶກສາ ແລະ ບໍລິການວຽກຄົ້ນຄວ້າ, ວິໄຈ, ອອກແບບ ແລະ ທີ່ປຶກສາບຸກຄົນ ເພື່ອເຂົ້າຍື່ນຊອງປະມູນ ສົມທຽບເງື່ອນໄຂ, ປະສົບການ ແລະ ລາຄາກ່ຽວກັບການໃຫ້ບໍລິການທີ່ປຶກສາ ແລະ ຄົ້ນຄວ້າວິໄຈ ກ່ຽວກັບ "ການສຶກສາ ແລະ ຄົ້ນຄວ້າ ໃນຫົວຂໍ້ "ເຂດການຄ້າເສລີຂ້າມຊາຍແດນ ພາຍໃຕ້ຂອບການຮ່ວມມື ແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ" ປະຈຳປີ 2022; ລາຍລະ ອຽດໜ້າວຽກ ມີດັ່ງລຸ່ມນີ້:

**I.** ໜ້າວຽກຂອງທີ່ປຶກສາ

a) Provide the technical supports on the outline of research report, research concept note and research methodology;

b) Conduct the research report on the titled *"the Pilot Cross-Border Collaboration in the Midst of Mekong-Lancang Free Trade Zones (FTZs) case study of Lao PDR";*

c) Provide and guide the contracted Lancang-Mekong research institutes of MLC member countries for conducting the research titled *"the Pilot Cross-Border Collaboration in the Midst of Mekong-Lancang Free Trade Zones (FTZs) case study of Cambodia, Myanmar, Thailand and Vietnam* respectively;

d) Incorparate the first draft of reserach reports from five member countries of Lancang-Mekong;

e) Provide the research recoommedations and suggestions for improvement, including prove read and editorial works for the case studies of MLC member countries;

f) Summarize the Lancang-Mekong member countries' case studies and provide the progress and completion reports to the client.

g) Participate in the field studies on the lesson learned of Free Trade Zones in China as well as provide the field studies' reports to the client;

h) Participate in the capacity building programs as an observer and facilitator to the trainers on the Free Trade Zone Development;

i) Incorparate the final reserach reports from five member countries of Lancang-Mekong;

j) Implement the roles, as an international consultant for guiding and advising the Lancan Mekong research teams, for commencing and suggesting the research papers, and for editing and improving the papers and proofread the final research papers for individual MLC member countries.

k) Participate in the dissemination workshop as a presentor of Lao case study, including the preparation of its report.

l) Submit the final research reports of Lancang-Mekong member countries (case studies of Lao PDR, Cambodia, Myanmar, Thailand and Vietnam) to the client.

**II.** ເງື່ອນໄຂການເຂົ້າຮ່ວມປະມູນ ມີດັ່ງນີ້:

1. ກຳນົດຂອບເຂດເວລາ

– ສາມາດພົວພັນເອົາຊອງປະມູນນຳພະແນກຮ່ວມມືເສດຖະກິດການຄ້າ, ກົມແຜນການ ແລະ ການຮ່ວມມື, ນັບແຕ່ວັນທີ 4 ເມສາ 2022 ແລະ ສົ່ງຊອງປະມູນບໍ່ໃຫ້ກາຍວັນທີ 22 ເມສາ 2022, ເບີໂທຕິດຕໍ່ 021 453 982, 020 55295395 ແລະ 020 29298926.

– ກຳນົດເປີດຊອງປະມູນ 29 ເມສາ 2022, ຫລັງຈາກນັ້ນພາຍໃນ 5 ວັນລັດຖະການ, ກົມແຜນການ ແລະ ການຮ່ວມມື ຈະແຈ້ງຜົນການປະມູນ ໃຫ້ບັນດາບໍລິສັດທີ່ປຶກສາ ທີ່ຊະນະການປະມູນ ເພື່ອເຊັນສັນຍາ (ອາຍຸສັນຍາແມ່ນ 12 ເດືອນ).

2. ເອກະສານທີ່ຕ້ອງປະກອບ

1) ໃບສະເໜີລາຄາ (ລວມອາກອນ 7%)
2) ແຜນຈັດຕັ້ງປະຕິບັດ ພ້ອມທັງກຳນົດເວລາໃນວຽກສຶກສາ, ຄົ້ນຄວ້າ, ວິໄຈ ແລະ ການໃຫ້ນຳແນະນຳ
3) ສຳເນົາທະບຽນວິສາຫະກິດ
4) ສຳເນົາໃບຢັ້ງຢືນເສຍອາກອນປີ 2021
5) ໃບ CV ຂອງເຈົ້າຂອງບໍລິສັດທີ່ປຶກສາ

**III.** ເງື່ອນໄຂ ແລະ ມາດຖານ ຂອງບໍລິສັດເຂົ້າຮ່ວມປະມູນ

1) ຕ້ອງປະກອບເອກະສານໃຫ້ຄົບຕາມລາຍການເອກະສານ ທີ່ກຳນົດໄວ້ໃນ ຂໍ້ 2 ຂອງ II.
2) ມູນຄ່າການປະມູນ (ລວມອາກອນລາຍໄດ້ 7%) ເພື່ອບໍລິການເປັນທີ່ປຶກສາໃນການສຶກສາ, ຄົ້ນຄວ້າ ແລະ ວິໄຈ ຕ້ອງສົມເຫດສົມຜົນ.
3) ບໍລິສັດໃຫ້ບໍລິການເປັນທີ່ປຶກສາໃນການສຶກສາ, ຄົ້ນຄວ້າ ແລະ ວິໄຈ ຕ້ອງມີປະສົບການໃນການສຶກສາ, ຄົ້ນຄວ້າ, ວິໄຈ ແລະ ສຳຫລວດ ດ້ານການຄ້າ, ອຸດສາຫະກຳປຸງແຕ່ງ, ທຸລະກິດຂະໜາດນ້ອຍ ແລະ ກາງ ແລະ ການບໍລິການອື່ນໆທີ່ກ່ຽວຂ້ອງ.

**IV.** ເງື່ອນໄຂການຊຳລະເງິນຄ່າແຮງງານ

ການຈ່າຍເງິນຄ່າແຮງງານໃຫ້ແກ່ ບໍລິສັດທີ່ປຶກສາ ໃນການສຶກສາ, ຄົ້ນຄວ້າ ແລະ ວິໄຈ ແມ່ນ ອີງໃສ່ສັນຍາວ່າດ້ວຍການວ່າຈ້າງທີ່ປຶກສາ ລະຫວ່າງ ກົມແຜນການ ແລະ ການຮ່ວມມື ແລະ ບໍລິສັດທີ່ປຶກສາທີ່ຊະນະການປະມູນໂດຍການນຳໃຊ້ຫ່ວງງົບປະມານ ໂຄງການຊ່ວຍເຫລືອຈາກ ສປ ຈີນ "ກອງທຶນພິເສດແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ ປະຈຳປີ 2021" ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງກະຊວງການເງິນ ວາງອອກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດທີ່ມີຄວາມສົນໃຈ ເພື່ອເຂົ້າຮ່ວມປະມູນ ແລະ ຄັດເລືອກ ຕາມຈຸດປະສົງທີ່ໄດ້ກ່າວມາດ້ວຍ.

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມແຜນການ ແລະ ການຮ່ວມມື

ປອ. ຄຳເພັດ ວົງດາລາ